**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 204 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 30 / 07 / 25

# ມະຕິ

## ຄະນະປະຈຳສະພາແຫ່ງຊາດ

## ກ່ຽວກັບການກຳນົດວັນສ້າງຕັ້ງສະພາປະຊາຊົນທ້ອງຖິ່ນ ແລະ ການກຳນົດການຈັດຊຸດ ສະພາປະຊາຊົນຂັ້ນແຂວງ

--------------------

- ອີງຕາມມາດຕາ 33 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2015 ແລະ ມາດຕາ 33 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020;
- ອີງຕາມແຈ້ງການ ສະບັບເລກທີ 74/ຫສພ, ລົງວັນທີ 11 ກໍລະກົດ 2025 ຂອງຫ້ອງວ່າການສູນກາງພັກ ກ່ຽວກັບຜົນກອງປະຊຸມກົມການເມືອງ ຮ່ວມກັບຄະນະເລຂາທິການສູນກາງພັກ ຄັ້ງວັນທີ 03-04 ກໍລະກົດ 2025.
- ອີງຕາມຜົນການຄົ້ນຄວ້າ ແລະ ສະເໜີຂອງຊຸ່ງວຊານກົດໝາຍ ກ່ຽວກັບການກຳນົດວັນສ້າງຕັ້ງສະພາປະຊາຊົນຂັ້ນທ້ອງຖິ່ນ ແລະ ການກຳນົດການຈັດຊຸດສະພາປະຊາຊົນຂັ້ນແຂວງ;

ເພື່ອໃຫ້ສອດຄ່ອງກັບລັກສະນະປະຫວັດສາດ ແລະ ສະພາບການຕົວຈິງ ກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສະພາປະຊາຊົນທ້ອງຖິ່ນຂອງປະເທດເຮົາ ໃນໄລຍະທີ່ຜ່ານມາ.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1** ເຫັນດີກຳນົດເອົາ ວັນທີ 04 ສິງຫາ 1978 ເປັນວັນສ້າງຕັ້ງສະພາປະຊາຊົນທ້ອງຖິ່ນ ຫຼື ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 2** ເຫັນດີປ່ຽນແປງການກຳນົດການຈັດຊຸດສະພາປະຊາຊົນຂັ້ນແຂວງ ຊຸດທີ II ປະຈຸບັນເປັນຊຸດທີ IV ແລະ ຊຸດທີ່ຈະເລືອກຕັ້ງໃນປີ 2026 ເປັນຊຸດທີ V.

**ມາດຕາ 3** ສະພາແຫ່ງຊາດ, ລັດຖະບານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງທ້ອງຖິ່ນ, ທຸກຂະແໜງການ ແລະ ອົງການ ໃນລະບົບການເມືອງປະຊາທິປະໄຕປະຊາຊົນ ຈົ່ງຮັບຮູ້ ແລະ ຮ່ວມມືຈັດຕັ້ງປະຕິບັດມະຕິສະບັບນີ້.

**ມາດຕາ 4** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາແຫ່ງຊາດ
ປະທານ

ປອ ໄຊສົມພອນ ພົມວິຫານ